ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

----=====000=====-----


Lao

ຄະນະກຳມະການຄຸ້ມຄອງຫຼັກຊັບ

Lao Securities Commission


ເລກທີ 014 / ຄຄຊ

ນະຄອນຫຼວງວຽງຈັນ, ວັນທີ 25 DEC 2013

# ແຈ້ງການ

**ເຖິງ:** ທ່ານຜູ້ອຳນວຍການໃຫຍ່ ບໍລິສັດຈົດທະບຽນ ໃນ ສປປ ລາວ.

**ເລື່ອງ:** ການຈັດຕັ້ງປະຕິບັດມາດຕະຖານສາກົນດ້ານການລາຍງານການເງິນ (IFRS).

- ອີງຕາມຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 188/ນຍ ລົງວັນທີ 24 ກໍລະກົດ 2013
- ອີງຕາມມະຕິກອງປະຊຸມ ຄະນະກຳມະການຄຸ້ມຄອງຫຼັກຊັບ ຄັ້ງທີ III ປະຈຳປີ 2013 ຄັ້ງວັນທີ 13 ກັນຍາ 2013.

ເພື່ອເພີ່ມທະວີຄວາມເຊື່ອໝັ້ນດ້ານການລົງທຶນ ໃນຕະຫຼາດຫຼັກຊັບລາວ ແລະ ເພື່ອກະກຽມໃຫ້ແກ່ການເຊື່ອມໂຍງກັບຕະຫຼາດທຶນໃນພາກພື້ນ ແລະ ສາກົນ ຄະນະກຳມະການຄຸ້ມຄອງຫຼັກຊັບ ແຈ້ງມາຍັງບັນດາບໍລິສັດຈົດທະບຽນ ໃນ ສປປ ລາວ ໃຫ້ກຽມຄວາມພ້ອມໃນການປະຕິບັດມາດຕະຖານສາກົນດ້ານການລາຍງານການເງິນດັ່ງນີ້:

1. ໃຫ້ບໍລິສັດຈົດທະບຽນ ເລີ່ມຈັດຕັ້ງປະຕິບັດມາດຕະຖານສາກົນດ້ານການລາຍງານການເງິນແບບສົມບູນ (International Financial Reporting Standard: IFRS full version) ນັບຕັ້ງແຕ່ປີການບັນຊີ 2014 ເປັນຕົ້ນໄປ;
2. ສຳລັບບໍລິສັດຈົດທະບຽນໃໝ່ ແມ່ນເລີ່ມຈັດຕັ້ງປະຕິບັດມາດຕະຖານ IFRS full version ຕັ້ງແຕ່ປີທີສາມ ພາຍຫຼັງທີ່ເປັນບໍລິສັດຈົດທະບຽນ. ກໍລະນີ ບໍລິສັດຈົດທະບຽນໃໝ່ ມີຄວາມສາມາດຈັດຕັ້ງປະຕິບັດມາດຕະຖານ IFRS full version ກໍສາມາດຈັດຕັ້ງປະຕິບັດໄດ້ເລີຍ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ປະຕິບັດຕາມເນື້ອໃນຈິດໃຈແຈ້ງການສະບັບນີ້ຢ່າງເຂັ້ມງວດ.

ຮ. ປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ

ຄະນະກຳມະການຄຸ້ມຄອງຫຼັກຊັບ ປະທານ

ດຣ. ສົມພາວ ໄຟສິດ


ຄະນະກຳມະການຄຸ້ມຄອງຫຼັກຊັບ, ບ້ານເພຍວັດ, ໜ່ວຍ 6, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ

ຕູ້ໄປສະນີ 19 ໂທລະສານ : (856)-21-21 7806 ໂທລະສັບ : (856)-21-217770 E-mail : lsco@lsc.gov.la